# Special Economic Zone, Lecture six: Types of developers

## 1. ຮູບການພັດທະນາ ຂພສ

ການພັດທະນາເຂດເສດຖະກິດພິເສດ ນອກຈາກ ຈະຕ້ອງໄດ້ນຳໃຊ້ແຫຼ່ງທຶນຈຳນວນມະຫາສານແລ້ວ ຍັງຕ້ອງໄດ້ຕ້ອງມີບຸກຄະລະກອນທີ່ມີທັກສະ, ມີຄວາມຮູ້ສະເພາະດ້ານ ແລະ ຜູ້ພັດທະນາທີ່ມີປະສົບການ ແລະ ປະສົບຜົນສຳເລັດໃນການພັດທະນາເຂດເສດຖະກິດພິເສດມາກອນ. ການພັດທະນາເຂດເສດຖະກິດພິເສດ ບໍ່ແມ່ນສະເພາະແຕ່ພັດທະນາພື້ນຖານໂຄງລ່າງ, ແຕ່ມັນໝາຍເຖີງການດຶງດູດ ແລະ ອຳນວຍຄວາມສະດວກດ້ານຕ່າງໆໃຫ້ແກ່ຜູ້ລົງທຶນທີ່ມີຈຸດປະສົງທີ່ຈະລົງທຶນໃນເຂດດັ່ງກ່າວ ຫຼື ຜູ້ລົງທຶນທີ່ກຳລັງລົງທຶນຢູ່ເຂດນັ້ນ, ແລະ ການບໍລິຫານຄຸ້ມຄອງທີ່ດີ ກໍຈະເຮັດໃຫ້ມີຄວາມປະສົບຜົນສຳເລັດສູງ.

ແນວໃດກໍຕາມ ໃນປັດຈຸບັນ ການພັດທະນາເສດຖະກິດພິເສດ ຢູ່ ສປປລາວ, ປະກອບມີ 3 ຮູບການດັ່ງນີ້:

1) ລັດລົງທຶນຮ້ອຍສ່ວນຮ້ອຍ;
2) ລັດຮ່ວມທຶນກັບເອກະຊົນພາຍໃນ ຫຼື ຕ່າງປະເທດ;
3) ເອກະຊົນລົງທຶນຮ້ອຍສ່ວນຮ້ອຍ[1].

### 1.1 ລັດລົງທຶນຮ້ອຍສ່ວນຮ້ອຍ:

ການລົງທຶນພັດທະນາຂອງລັດຮ້ອຍສ່ວນຮ້ອຍ ( 100% ) ແມ່ນ ຂພສ ທີ່ລັດເປັນຜູ້ລົງທຶນພັດທະນາພື້ນຖານໂຄງລ່າງ ແລະ ສິ່ງສາທາລະນຸປະໂພກຕ່າງໆທັງໝົດໃນເຂດ ເພື່ອອຳນວຍຄວາມສະດວກດຶງດູດການລົງທຶນລາຍຍ່ອຍເຂົ້າມາລົງທຶນໃນ ຂພສ ແລະ ຄຸ້ມຄອງບໍລິຫານດ້ວຍຄະນະບໍລິຫານທີ່ມາຈາກພາກສ່ວນລັດຮ້ອຍສ່ວນຮ້ອຍ.

ເຂດເສດຖະກິດພິເສດ ແຫ່ງທຳອິດທີ່ຖືກສ້າງຕັ້ງຂຶ້ນ ຕາມດຳລັດຂອງ ນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ ລົງວັນທີ 29 ກັນຍາ 2003. ຊຶ່ງມີເນື້ອທີ່ ທັງໝົດ 677 ເຮັກຕາ, ຈຸດປະສົງໃນການສ້າງຕັ້ງເຂດດັ່ງກ່າວນີ້ ແມ່ນເພື່ອສົ່ງເສີມການລົງທຶນ ໃນຂະແໜງການຜະລິດ, ການຄ້າ ແລະ ການບໍລິການ ຕາມແລວເສັ້ນທາງເສດຖະກິດຕາເວັນອອກ-ຕາເວັນຕົກ ບົນພື້ນຖານ ການຄຸ້ມຄອງດ້ວຍດຳລັດສະເພາະ ຂອງເຂດຕາກົນໄກຕະຫຼາດ ພາຍໃຕ້ການບໍລິຫານຄຸ້ມຄອງຂອງລັດ.

ໃນໄລຍະທີ່ຜ່ານມາ, ພື້ນຖານໂຄງລ່າງໄດ້ມີການພັດທະນາ, ການສ້າງໜໍ່ແໜງການຫັນເປັນອຸດສະຫະກຳ ແລະ ທັນສະໄໝ, ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນໂດຍລວມແລ້ວມີທ່າກ້າວຂຶ້ນ, ການລົງທຶນຂອງລັດ ແລະ ການລົງທຶນຂອງຕ່າງປະເທດ ກໍມີທ່າອ່ຽງເພີ່ມຂຶ້ນ, ໃນສົກປີ 2002-2003 ຫາ ສົກປີ 2010-2011 ລັດຖະບານໄດ້ລົງທຶນທັງໝົດ 33 ພັນລ້ານກີບ ແລະ ເອກະຊົນໄດ້ລົງທຶນທັງໝົດປະມານ 5 ລ້ານໂດລາສະຫະລັດ[2]

ແນວໃດກໍຕາມ, ການລົງທຶນພັດທະນາເຂດເສດຖະກິດພິເສດ ຊຶ່ງແມ່ນລັດເປັນຜູ້ລົງທຶນເອງ ຮ້ອຍເປີເຊັນ ໃນເວລານັ້ນ ຍັງມີສິ່ງທ້າທາຍຫຼາຍດ້ານ ເຊັ່ນ: ຄວາມຈຳກັດທາງດ້ານງົບປະມານ, ຊຶ່ງເຮັດໃຫ້ການພັດທນາມີຄວາມຊັກຊ້າ, ທາງດ້ານນິຕິກຳຍັງພົບຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດດຳລັດເຂດເສດຖະກິດພິເສດ, ຍ້ອນຂະແໜງການທີ່ກ່ຽວຂ້ອງຍັງຊິນເຄີຍກັບກົນໄກການລົງທຶນແບບທົ່ວໄປທີ່ມີກົດໝາຍຮອງຮັບ.

---

[1] ມາດຕາ 13, ດຳລັດວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 7 ມີຖຸນາ 2018

[2] ແຜນຍຸດທະສາດ ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ ສປປ ລາວ ແຕ່ປີ 2011 ຮອດປີ 2020, ນະຄອນຫຼວງວຽງຈັນ, ກໍລະກົດ ປີ 2012, ໜ້າທີ 7.

ທາງດ້ານບຸກຄະລະກອນ ທີ່ມີຄວາມຮູ້ ແລະ ມີຄວາມສາມາດ, ຍັງມີຈໍານວນຈໍາກັດ, ກຽບຈະບໍ່ພຽງພໍ່ກັບຄວາມຕ້ອງການຂອງໜ້າວຽກ, ຜູ້ທີ່ມີຄວາມຮູ້, ຄວາມສາມາດໃນການພັດທະນາ, ບໍລິຫານ ແລະ ຄຸ້ມຄອງໃຫ້ໄປຕາມກົນໄກ ຫົວໜ່ວຍບໍລິຫານນ້ອຍ -ສັງຄົມກວ້າງ ຍັງມີຈໍາກັດ.

**1.2 ລັດຮ່ວມທຶນກັບເອກະຊົນພາຍໃນ ຫຼື ຕ່າງປະເທດ:**

ການລົງທຶນພັດທະນາຮ່ວມ ລະຫວ່າງ ລັດກັບເອກະຊົນ ແມ່ນ ຂພສ ທີ່ລັດລົງທຶນຮ່ວມກັບເອກະຊົນພາຍໃນ ຫຼື ຕ່າງປະເທດ ເພື່ອພັດທະນາພື້ນຖານໂຄງລ່າງ ແລະ ສິ່ງສາທາລະນຸປະໂພກທັງໝົດຂອງເຂດ ຊຶ່ງລັດອາດປະ ກອບທຶນດ້ວຍສິດນໍາໃຊ້ທີ່ດິນ ໂດຍລັດຖືຮຸ້ນຢ່າງໜ້ອຍສາມສິບສ່ວນຮ້ອຍ (30% ) ຫຼື ການປະກອບທຶນດ້ວຍຮູບການອື່ນ ຕາມການຕົກລົງເຫັນດີຂອງສອງຝ່າຍ, ສ່ວນຜູ້ພັດທະນາເອກະຊົນ ແມ່ນປະກອບທຶນເຂົ້າຮຸ້ນດ້ວຍເງິນ ສົດ ແລະ ຊັບສິນ, ຮ່ວມກັນຄຸ້ມຄອງບໍລິຫານ ແລະ ແບ່ງຄວາມຮັບຜິດຊອບຂອງແຕ່ລະຝ່າຍ.

ເຂດນິຄົມອຸດສະຫະກໍາ ແລະ ການຄ້າວຽງຈັນ-ໂນນທອງ ເປັນເຂດໜຶ່ງທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 30 ຕຸລາ 2009, ດ້ວຍການຮ່ວມມືລະຫວ່າງ ລັດຖະບານ ສປປ ລາວ, ຊຶ່ງຕ່າງໜ້າໃຫ້ລັດຖະບານໂດຍ ກະຊວງອຸດສະຫະກໍາ ແລະ ການຄ້າ ຖືຫຸ້ນ 30% ແລະ ບໍລິສັດ ໜໍາເວ ພັດທະນາຈໍາກັດ ( ຈີນໄຕ້ຫວັນ) ຖືຮຸ້ນ 70% ຕົກເປັນມູນຄ່າທັງໝົດ 43 ລ້ານໂດລາສະຫະລັດ, ທຶນຈົດທະບຽນ 13 ລ້ານໂດລາ ສະຫະລັດ ແລະ ມີອາຍຸການ ພັດທະນາ 75 ປີ ໂດຍມີເນື້ອທີ່ 110 ເຮັກຕາ ໃນເຂດຫຼັກ 21 ທີບ້ານຫົວຊຽງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ຊຶ່ງກະຊວງອຸດສະຫະກໍາການຄ້າ ນໍາເອົາສິດນໍາໃຊ້ທີ່ດິນຈໍານວນ 110 ເຮັກຕາ ປະກອບເປັນຮຸ້ນ. ສ່ວນຝ່າຍພັດທະນາ ແມ່ນປະກອບເປັນເງິນສົດ ເພື່ອນໍາໃຊ້ເຂົ້າໃນການພັດທະນາພື້ນຖານໂຄງລ່າງຂອງເຂດ. ເປົ້າໝາຍຕົ້ນຕໍໃນການພັດທະນາ ແມ່ນເພື່ອດຶງດູດເອົາບັນດາວິສະຫະກິດອຸດສະຫະກໍາ ແລະ ການຄ້າ, ການລົງທຶນເຂົ້າໃນເຂດດັ່ງກ່າວ.

ການພັດທະນາເຂດດັ່ງກ່າວນີ້ ໄດ້ແບ່ງອອກເປັນ 4 ໄລຍະຄື: 1) ຂັ້ນຕອນບຸກເບີກໜ້າດິນ ພື້ນຖານໂຄງລ່າງ ຄື: ຖາງປ່າ ແລະ ປັບໜ້າດິນໃຫ້ຮາບພຽງ; 2) ຂັ້ນຕອນກໍ່ສ້າງພື້ນຖານໂຄງລ່າງ ຄື: ສ້າງຖະໜົນຫົນທາງ, ນໍ້າປະປາ, ໄຟຟ້າ, ໂທລະສັບ ແລະ ອື່ນໆ; 3) ຂັ້ນຕອນຈັດສັນແບ່ງເຂດຂອງການລົງທຶນ ແລະ ປັບປຸງພື້ນຖານໂຄງລ່າງ ຂອງແຕ່ລະເຂດໃຫ້ແພດເໝາະ ກັບປະເພດການລົງທຶນ; 4) ຂັ້ນຕອນກໍ່ສ້າງຕຶກອາຄານຕ່າງໆ ຕາມຄວາມຕ້ອງການຂອງບໍລິສັດຮ່ວມທຶນ ແລະ ຮັບຮອງການລົງທຶນ. ເຂດດັ່ງກ່າວນີ້, ສ້າງຕັ້ງຂຶ້ນພາຍໃຕ້ດໍາລັດວ່າດ້ວຍ ເຂດເສດຖະກິດພິເສດ ຢູ່ ສປປ ລາວ ສະບັບເລກທີ 433/ນຍ, ລົງວັນທີ 26 ຕຸລາ 2021.

ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ, ຕັ້ງຢູ່ ແຂວງບໍ່ແກ້ວ ໃນປີ 2007, ຜູ້ພັດທະນາ ແມ່ນ ລັດຮ່ວມມືກັບພາກເອກະຊົນ ຈາກ ສປຈີນ. ຈຸດປະສົງຕົ້ນຕໍ ແມ່ນ ການຄ້າ-ການບໍລິການ, ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ, ສົ່ງເສີມທາງດ້ານ ກະສິກໍາ ແລະ ອຸດສະຫະກໍາ, ການທ່ອງທ່ຽວ ແລະ ການທະນາຄານ, ສູນການສຶກສາ , ທຸລະກິດ ແລະ ການຄ້າສາກົນ, ການພັດທະນາອະສັງຫາລິມະຊັບ, ການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ, ສ້າງເຂດການຄ້າ ປອດພາສີ ແລະ ອື່ນໆ.

**1.3 ເອກະຊົນລົງທຶນຮ້ອຍສ່ວນຮ້ອຍ:**

ການລົງທຶນພັດທະນາ ດ້ວຍເອກະຊົນຮ້ອຍສ່ວນຮ້ອຍ ( 100% ) ແມ່ນ ຂສພ ທີ່ເອກະຊົນພາຍໃນ ຫຼື ຕ່າງປະເທດ ເປັນຜູ້ລົງທຶນພັດທະນາພື້ນຖານໂຄງລ່າງ ແລະ ສິ່ງສາທາລະນຸປະໂພກທັງໝົດຂອງເຂດດ້ວຍງົບປະມານຂອງຜູ້ພັດທະນາເອງ ສໍາລັບການຄຸ້ມຄອງບໍລິຫານ ແມ່ນຮູບແບບສະພາບໍລິຫານ ທີ່ປະກອບດ້ວຍຜູ້ບໍລິຫານຈາກ ພາກລັດ ແລະ ພາກເອກະຊົນ ບົນພື້ນຖານການຈັດຕັ້ງ ແລະ ເຄື່ອນໄຫວ ຕາມສິດ, ໜ້າທີ່ ແລະ ພາລະບົດບາດຂອງແຕ່ລະຝ່າຍ.

ການພັດທະນາເຂດເສດຖະກິດພິເສດຢູ່ ສປປລາວ ມີຄຸນລັກສະນະພິເສດ ແລະ ແຕກຕ່າງຈາກການພັດທະນາເຂດເສດຖະກິດພິເສດຢູ່ປະເທດອື່ນໆ. ເນື່ອງຈາກປະເທດອື່ນ ລັດຖະບານເປັນຜູ້ພັດທະນາພື້ນຖານໂຄງລ່າງທີ່ຈໍາເປັນ , ໃຫ້ນະໂຍບາຍສົ່ງເສີມພິເສດ ແລະ ສ້າງເງື່ອນໄຂທີອໍານວຍຄວາມສະດວກໄວ້ລໍຖ້າ ເພື່ອໃຫ້ນັກລົງທຶນ ເຂົ້າມາ

ລົງທຶນຕາມຂະແໜງການຕ່າງໆ, ຕາມເປົ້າໝາຍທີ່ລັດຖະບານໄດ້ກໍານົດໄວ້. ສະເພາະ ສປປ ລາວ ແມ່ນເຫັນໄດ້ເຖິງທ່າແຮງ ແລະ ຄວາມສໍາຄັນຂອງການພັດທະນາເຂດເສດຖະກິດໃຫ້ມີຄວາມຫຼາກຫຼາຍ, ບວກກັບເງື່ອນໄຂທີ່ຕັ້ງພູມສັນຖານ ທີ່ບໍ່ມີຊາຍແດນຕິດຈອດກັບທະເລ ແລະ ງົບປະມານຂອງລັດ ມີຈໍານວນຈໍາກັດ, ຈຶ່ງໄດ້ສົ່ງເສີມໃຫ້ຜູ້ພັດທະນາເອກະຊົນທັງພາຍໃນ ແລະ ຕ່າງປະເທດເຂົ້າມາລົງທຶນ ໂດຍໃຫ້ນະໂຍບາຍສົ່ງເສີມພິເສດ ແນໃສ່ພັດທະນາພື້ນຖານໂຄງລ່າງ, ການຜະລິດເພື່ອສົ່ງອອກ, ຍົກລະດັບສີມືແຮງງານ ແລະ ຖ່າຍທອດເຕັກໂນໂລຊີທີ່ທັນສະໄໝ. ພ້ອມນີ້, ເຂດເສດຖະກິພິເສດ ຍັງປະກອບສ່ວນສໍາຄັນ ຕໍ່ການພັດທະນາ ເສດຖະກິດ-ສັງຄົມ ໂດຍສະເພາະການພັດທະນາພື້ນຖານໂຄງລ່າງ, ການສ້າງຕົວເມືອງໃໝ່ຢູ່ຊົນນະບົດໃຫ້ມີໃບໜ້າໃໝ່, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ສ້າງໜໍ່ແໜງທາງດ້ານອຸດສະຫະກໍາ, ການຖ່າຍທອດເຕັກໂນໂລຊີ, ສ້າງວຽກເຮັດງານທໍາໄປຄຽງຄູ່ກັບການຍົກລະດັບສີມືແຮງງານ ໃຫ້ປະຊາຊົນໃນທາງກົງ ແລະ ທາງອ້ອມ, ສ້າງລາຍຮັບໃໝ່ ໃຫ້ລັດຖະບານ ແລະ ອື່ນໆ.

ການພັດທະນາເຂດເສດຖະກິດພິເສດ ໄດ້ສ້າງຄວາມເຊື່ອໝັ້ນ ສາມາດດຶງເອົາບໍລິສັດລາຍໃຫ່ຍ ທີ່ມີຊື່ສຽງ ແລະມີຄຸນນະພາບ ຈາກຕ່າງປະເທດ ເຂົ້າມາລົງທຶນນັບມື້ນັບຫຼາຍຂຶ້ນ, ໂດຍສະເພາະ ຢູ່ເຂດສະຫວັນເຊໂນ, ເຂດກວມລວມໄຊເຊດຖາ, ເຂດນິຄົມອຸດສະຫະກໍາ ການຄ້າວຽງຈັນ-ໂນນທອງ, ເຂດບໍ່ເຕນແດນຄໍາ ແລະ ເຂດສາມຫຼ່ຽມຄໍາ.

ເຂດເສດຖະກິດ ສະເພາະ ພູຂຽວ ໄດ້ສ້າງຕັ້ງຂຶ້ນຢູ່ແຂວງຄໍາມ່ວນ ໃນທ້າຍປີ 2010 ໂດຍແມ່ນບໍລິສັດ ເອັສວີກຸບ, ຊຶ່ງເປັນບໍລິສັດຂອງນັກລົງທຶນພາຍໃນ ເປັນຜູ້ລົງທຶນ 100% ໃນມູນຄ່າຕາມສັນຍາ 708 ລ້ານໂດລາສະຫະລັດ. ຈຸດປະສົງຕົ້ນຕໍ ແມ່ນເພື່ອພັດທະນາເຂດດັ່ງກ່າວ ໃຫ້ເປັນຕົວເມືອງໃໝ່, ມີສູນບໍລິການ-ການຄ້າ, ການສຶກສາ, ການທ່ອງທ່ຽວ, ການປິ່ນປົວສຸຂະພາບ ແລະ ໂຮງງານອຸດສະຫະກໍາການຜະລິດ ແລະ ອື່ນໆ. ເຂດດັ່ງກ່າວນີ້, ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ດໍາລັດ ວ່າດ້ວຍ ຂພສ ຢູ່ ສປປ ລາວ ສະບັບເລກທີ 443/ນ, ລົງວັນທີ 26 ຕຸລາ 2010.

ເຂດເສດຖະກິດພິເສດ ບໍ່ເຕນ ແດນຄໍາ, ຕັ້ງ ຢູ່ແຂວງຫຼວງນໍ້າທາ ພາກເໜືອ ຂອງ ສປປລາວ, ຊຶ່ງກວມເອົາ 1640 ເຮັກຕາ, ຊຶ່ງຈຸດປະສົງແມ່ນ ການບໍລິການ ແລະ ການຄ້າ, ກະສິກໍາ, ອຸດສະຫະກໍາ, ສູນການສຶກສາ, ການພັດທະນາອະສັງຫາລິມາຊັບ ແລະ ສະຖາບັນການເງິນ, ເຊັ່ນ: ທະນາຄານ ແລະ ຕະຫຼາດຫຸ້ນ, ໃນນີ້, ຜູ້ພັດທະນາແມ່ນເອກະຊົນ 100 % ຈາກ ສປຈີນ[3].

ສັງເກດເຫັນໄດ້ວ່າ ການພັດທະນາເຂດເສດຖະກິດພິເສດ ແມ່ນການລົງທຶນຈໍານວນມະຫາສານ ໃນການພັດທະນາພື້ນຖານໂຄງລ່າງ, ບຸກຄະນະກອນ, ເຕັກນິກບໍລິຫານ, ການຜະລິດ ແລະ ການຕະຫຼາດ. ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງໄດ້ເຊື່ອມໂຍງ ກັບແຜນພັດທະນາ ເຂດເສດຖະກິດພິເສດ ແຕ່ຫົວທີ, ເພື່ອໃຫ້ຕິດພັນກັບກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດຢູ່ແຕ່ລະໄລຍະ ເພື່ອເຮັດໃຫ້ການພັດທະນາມີຄວາມສອດຄ່ອງ ແລະ ຍືນຍົງ.

ຊຶ່ງໜຶ່ງໃນປັດໄຈຕົ້ນຕໍທີ່ຈະເຮັດໃຫ້ການພັດທະນາ ເຂດເສດຖະກິດພິເສດ ປະສົບຜົນສໍາເລັດ ແລະ ມີຄວາມຍືນຍົງແມ່ນການດຶງດູດ ແລະ ສົ່ງເສີມການລົງທຶນ. ຜູ້ພັດທະນາ ແລະ ຜູ້ລົງທຶນ ມີບົດບາດສໍາຄັນໃນການພັດທະນາ ແລະ ຄຸ້ມຂອງ ເຂດເສດຖະກິດພິເສດ. ດັ່ງນັ້ນ, ຕ້ອງມີກົດໝາຍ, ລະບຽບການ ແລະ ກົນໄກການບໍລິຫານທີ່ສ້າງຄວາມເຊື່ອໝັ້ນ ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ພັດທະນາ. ໂດຍສະເພາະຜູ້ພັດທະນາລາຍໃຫ່ຍ ເພື່ອມາລົງທຶນໃນການພັດທະນາເຂດເສດຖະກິດພິເສດ, ນອກຈາກຜູ້ພັດທະນາລາຍໃຫ່ຍ ຈະເປັນຜູ້ພັດທະນາເຂດໃຫ້ມີຄວາມສໍາເລັດແລ້ວ ຍັງເປັນຕົວແທນໃຫ້ແກ່ລັດຖະບານ ໃນການບໍລິຫານຄຸ້ມຄອງທາງດ້ານເສດຖະກິດຂອງເຂດນໍາ

---

[3] http://investlaos.gov.la/where-to-invest/special-economic-zone-sez/3/

ອີກ ແຕ່ລັດກໍຕ້ອງມີກົນໄກໃນການຄຸ້ມຄອງ ແລະ ລະບຽບກົດໝາຍທີສອດຄ່ອງ ແລະ ຮັດກຸມ ເພື່ອເຮັດໃຫ້ສາມາດຕິດຕາມ ແລະ ກວດສອບ ແລະ ຄວາມຄືບໜ້າຂອງເຂດໄດ້.

ຮູບການການພັດທະນາເຂດເສດຖະກິດພິເສດ ຢູ່ ສປປລາວ, ຊຶ່ງປັດຈຸບັນມີ ທັງການພັດທະນາໂດຍກົງຈາກລັດໝາຍຄວາມວ່າລັດລົງທຶນເອງຮເອຍເປີເຊັນໃນການພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມ ສະດວກຕ່າງພາຍໃນເຂດ ເພື່ອຮັບຮອງ ແລະ ສົ່ງເສີມການລົງທຶນໃຫ້ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນຢູ່ໃນເຂດດັ່ງກ່າວ.

ນອກຈາກນີ້, ການຮ່ວມທຶນພັດທະນາ ລະຫວ່າງ ລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ກໍ່ແມ່ນອີກຮູບການໜຶ່ງ ໃນການພັດທະນານເສດຖະກິດພິເສດ. ຮູບການນີ້ ແມ່ນການຮ່ວມທຶນກັນລະຫວ່າງພາກລັດ ແລະເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ, ຊຶ່ງການຮ່ວມທຶນ ແມ່ນພາຍໃຕ້ສັນຍາການຮ່ວມທຶນ, ລັດອາດຈະປະກອບທຶນ ດ້ວຍສິດນໍາໃຊ້ທີດິນມາປະກອບເປັນຮຸ້ນ ຫຼື ເປັນທຶນໃນໂຄງການດັ່ງກ່າວ.

ອີກຮູບການໜຶ່ງ ແມ່ນການລົງທຶນພັດທະນາເຂດເສດຖະກິດພິເສດ ຊຶ່ງເອກະຊົນເປັນຜູ້ລົງທຶນພັດທະນາເອງ 100%. ໝາຍຄວາມວ່າ ເອກະຊົນພາຍໃນ ຫຼື ຕ່າງປະເທດ ເປັນຜູ້ລົງທຶນ, ເຕັກໂນໂລຊີ ມາພັດທະນາເຂດ ດ້ວຍທຶນຂອງຕົນເອງທັງໝົດ. ໂດຍການສໍາປະທານທີດິນຈາກລັດ ແລະ ມີບົດບັນທຶກຮ່ວມມືກັບັດຖະບານ ຕາມທີໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ແນວໃດກໍຕາມ, ການພັດທະນາເຂດໃຫ້ປະສົບຜົນສໍາເລັດ, ມີປະສິດທິພາບ ແລະ ມີປະສິດຜົນທີ່ຜົນ ແລະພາໃຫ້ເກີດຜົນປະໂຫຍດສູງສຸດ ຕໍ່ຜູ້ພັດທະນາ, ຜູ້ລົງທຶນ, ປະຊາຊົນ ແລະ ຜົນປະໂຫຍດລວມ ຂອງຊາດນັ້ນ. ມີຄວາມຈໍາເປັນຫຼາຍທີ່ຕ້ອງອາໄສຫຼາຍທ່າແຮງຈາກພາກລັດ ແລະ ເອກະຊົນ, ເປັນຕົ້ນແມ່ນ ດ້ານທຶນຮອນ, ທາງດ້ານວິຊາການ ແລະ ປະສົບການຂອງຜູ້ພັດທະນາ.

ໂດຍສະເພາະ ປະເທດກໍາລັງພັດທະນ, ຊຶ່ງມີຄວາມຈໍາກັດທາງດ້ານທຶນຮອນ, ແລະ ຂາດປະສົບການ ແລະ ບຸກຄະລະກອນທີມີທັກສະ ແລະ ຄວາມຮູ້ສະດ້ານ. ຈຶ່ງມີຄວາມຈໍາເປັນຕ້ອງໄດ້ເປີດກ້ວາງ ແລະ ແລກປ່ຽນບົດຮຽນນໍາຕ່າງປະເທດ, ໃນນີ້ ອາດຈະລວມທັງ ພາກລັດ ແລະ ພາກເອກະຊົນ ເພື່ອຍາດແຍ່ງ ແລະ ຖອດຖອນບົດຮຽນຮ່ວມກັນຈຶ່ງຈະເຮັດໃຫ້ການພັດທະນາເຂດປະສົບຜົນສໍາເລັດຕາມຈຸດປະສົງທີໄດ້ກໍານົດໄວ້. ເນື່ອງຈາກວ່າ ການສ້າງຕັ້ງເຂດດັ່ງກ່າວນີ້, ແມ່ນມີຄວາມສໍາຄັນຫຼາຍ ໃນການພັດພັດທະນາ ເສດຖະກິດ-ສັງຄົມ ຂອງປະເທດ..

ຊຶ່ງສາມາດເຮັດໃຫ້ພື້ນຖານເສດຖະກິດມີຄວາມເຕີບໂຕ ແລະ ເຂັ້ມແຂງ, ເຮັດໃຫ້ການພັດທະນາພື້ນຖານໂຄງລ່າງ ມີການພັດທະນາ ແລະ ເຮັດໃຫ້ເກີດໃບໜ້າໃໝ່ທີດີໃຫ້ແກ່ປະເທດ, ແຕ່ໃນຂະນະດຽວກັນ ລັດຕ້ອງມີກົນໄກທີດີ ໃນການຄຸ້ມຄອງບໍລິຫານ ໂດຍສະພາະແມ່ນິຕິກໍາ ແລະ ລະບຽບກົດໝາຍ ແລະ ຈັດຕັ້ງປະຕິບັດການພັດທະນາແລະ ການລົງທຶນໃນເຂດດັ່ງນັ້ນຕ້ອງໄປຕາມແຜນແມ່ບົດການພັດທະນາ. ເໜັ້ນໃສ່ການພັດທະນາໃນເຂດດັ່ງກ່າວເປັນການພັດທະ ນາແບບຍືນຍົງ ເປັນມິດກັບສິ່ງແວດລ້ອມ ແລະ ບໍ່ມີຜົນກະທົບຕໍ່ລະບົບເສດຖະກິດສັງຄົມ, ບໍ່ມີຜົນກະທົບຕໍ່ວິຖີການດໍາລົງຊີວິດຂອງປະຊາຊົນບັນດາເຜົ່າ ແລະ ບໍ່ມີຜົນກະທົບຕໍ່ຮີດຄອງປະເພນີອັນດີງາມຂອງຊາດ.

ການພັດທະນາ, ນອກຈາກຈະພັດທະນາພື້ນຖານໂຄງລ່າງ ເພື່ອດຶງດູດການລົງທຶນ ຈາກຜູ້ລົງທຶນພາຍໃນ ແລະຕ່າງປະເທດແລ້ວ. ຕ້ອງໄດ້ສ້າງໂຄງການທີເຮັດໃຫ້ປະຊົນ ແລະ ຊຸມຊົນໄດ້ມີສ່ວນຮ່ວມ, ເປັນຕົ້ນແມ່ນ ສູນການສຶກສາ, ການຖ່າຍທອດຄວາມຮູ້ ເຕັກໂນໂລຊີ, ການປົກປັກອານຸລັກວັດທະນາທໍາອັນດີຂອງຊາດ.

ສະຫຼຸບແລ້ວ, ການພັດທະນາເຂດເສດຖະກິດພິເສດ ຖ້າຫາກມີກົນໄກການຄຸ້ມຄອງ ແລະ ພັດທະນາທີດີ ກໍສາມາດປະສົບຜົນສໍາເລັດໄດ້, ບໍ່ວ່າຈະພັດທະນາດ້ວຍຮູບການໃດກໍ່ຕາມ, ຈາດຈະເປັນການລົງທຶນ100% ຈາກພາກລັດ, ການຮ່ວມກັນລົງທຶນ ລະຫວ່າງພາກລັດ ແລະ ເອກະຊົນ ຫຼື ການລົງທຶນພັດທະນາເອງຂອງເອກະຊົນ 100% ກໍຕາມກໍສາມາດປະສົບຜົນສໍາເລັດໄດ້.

ແຕ່ເນື່ອງຈາກເປັນໂຄງການລົງທຶນທຶນຂະໜາດໃຫ່ຍ, ໃຊ້ທຶນຈຳນວນຫຼາຍ ແລະ ໃຊ້ເວລາຍາວນານໃນການພັດທະນາ. ສະນັ້ນ, ຈຶ່ງຈຳເປັນທີ່ຕ້ອງມີການວາງແຜນໃນກາພັດທະນາໃຫ້ຊັດເຈນ, ໂດຍສະເພາະ ແຜນຄົນ, ແຜນວຽກແຜນງານ, ແຜນເງິນ ແລະ ການນຳເອົາເຕັກໂນໂລຊີທີ່ທັນສະໄໝ ແລະ ອຸປະກອນທີ່ໄດ້ຄຸນນະພາບເຂົ້າໃນການພັດທະນາເຂດ. ພ້ອມກັນນັ້ນ, ກໍ່ຕ້ອງມີການຖອດຖອນບົດຮຽນ ແລະ ແລກປ່ຽນຄວາມຮູ້ນຳຜູ້ທີ່ມີປະສົບການໃນການພັດທະນາເຂດໃນລະດັບພາກພື້ນ ແລະ ສາກົນ, ກໍ່ຈະເຮັດໃຫ້ການພັດທະນາເຂດ ເກີດຜົນປະໂຫຍດສູງສຸດຕໍ່ ຜູ້ພັດທະນາ, ຜູ້ລົງທຶນ ແລະ ປະຊາຊົນພາຍໃນຊາດໃນລະດັບດີ.

## ເອກະສານອ້າງອີງ


1. ດຳລັດວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 7 ມີຖຸນາ 2018, ມາດຕາ 13,
2. ແຜນຍຸດທະສາດ ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ ສປປ ລາວ ແຕ່ປີ 2011 ຮອດປີ 2020, ນະຄອນຫຼວງວຽງຈັນ, ກໍລະກົດ ປີ 2012, ໜ້າທີ 7.
3. ເວບໄຊ້ http://investlaos.gov.la/where-to-invest/special-economic-zone-sez/3/